# ທະນາຄານ ລາວຈີນ ຈຳກັດ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

# ທະນາຄານ ລາວຈີນ ຈຳກັດ

## ສາລະບານ


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 5 |
| ໃບລາຍງານຜົນການດຳເນີນງານ | 6 - 7 |
| ໃບລາຍງານຖານະການເງິນ | 8 - 10 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 12 |
| ໃບລາຍງານກະແສເງິນສົດ | 13 - 14 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 15 - 42 |

# ທະນາຄານ ລາວຈີນ ຈຳກັດ

ຂໍ້ມູນທົ່ວໄປ

### ທະນາຄານ

ທະນາຄານ ລາວຈີນ ຈຳກັດ ("ທະນາຄານ") ແມ່ນທະນາຄານຮ່ວມທຶນ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ໂດຍຮ່ວມທຶນລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (39.87%) ແລະ ທະນາຄານ ຟູ ດຽນ ຈຳກັດ (60.13%). ທະນາຄານໄດ້ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດການດຳເນີນທຸລະກິດດ້ານການທະນາຄານ ເລກທີ 20/ ທຫລ ອອກໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 20 ມັງກອນ 2014. ໃບທະບຽນວິສາຫະກິດສະບັບລ່າສຸດ ເລກທີ 0839/ຈທວ ລົງວັນທີ 26 ເມສາ 2022.

ທຶນຈົດທະບຽນເບື້ອງຕົ້ນຂອງທະນາຄານແມ່ນ 300,000,000,000 ກີບ. ທຶນຈົດທະບຽນທີ່ທະນາຄານໄດ້ຖອກຕົວຈິງ ນະວັນທີ 31 ທັນວາ 2023 ແມ່ນ 379,879,082,826 ກີບ (31 ທັນວາ 2022: 379,879,082,826 ກີບ).

ກິດຈະກຳຕົ້ນຕໍຂອງທະນາຄານແມ່ນ ເພື່ອຕອບສະໜອງການບໍລິການທົ່ວໄປດ້ານການທະນາຄານ ແລະ ບໍລິການອື່ນໆທີ່ກ່ຽວຂ້ອງກັບການເງິນໃນ ສປປ ລາວ.

ທະນາຄານ ຕັ້ງຢູ່ ຕຶກທະນາຄານລາວຈີນ ສຳນັກງານໃຫຍ່, ເລກທີ 268, ໜ່ວຍ 12, ບ້ານ ສີບຸນເຮືອງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2023, ທະນາຄານມີ 01 (ໜຶ່ງ) ສຳນັກງານໃຫຍ່ ແລະ 01 (ໜຶ່ງ) ສາຂາຢູ່ແຂວງ ຫຼວງນ້ຳທາ, ສປປ ລາວ.

### ສະພາອຳນວຍການ

ສະມາຊິກຂອງສະພາອຳນວຍການພາຍໃນປີ ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ/ລາອອກ* |
|---|---|---|
| ທ່ານ. ວຽງສຸກ ຈຸນທະວົງ | ປະທານ | ວັນທີແຕ່ງຕັ້ງ 26 ສິງຫາ 2021 |
| ທ່ານ.Yang Yong | ຮອງປະທານ | ວັນທີແຕ່ງຕັ້ງ 08 ເມສາ 2022 |
| ທ່ານ. ບຸນລ້ອມ ອຸນລະທະວົງ | ສະມາຊິກ | ວັນທີແຕ່ງຕັ້ງ 07 ພະຈິກ 2023 |
| ທ່ານ. Fu Zhiqian | ສະມາຊິກອິດສະຫຼະ | ວັນທີແຕ່ງຕັ້ງ 26 ສິງຫາ 2021 |
| ທ່ານ. Wan Zhiteng | ສະມາຊິກ | ວັນທີແຕ່ງຕັ້ງ 26 ສິງຫາ 2021 |
| ທ່ານ. ຄິດ ສັງສີນໄຊ | ສະມາຊິກ | ວັນທີລາອອກ 06 ພະຈິກ 2023 |

### ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານພາຍໃນປີ ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ມີດັ່ງນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ/ລາອອກ* |
|---|---|---|
| ທ່ານ. Wan Zhiteng | ຜູ້ອຳນວຍການ | ວັນທີແຕ່ງຕັ້ງ 08 ຕຸລາ 2021 |
| ທ່ານ. ບຸນລັດ ສຸຕິສັກ | ຮອງຜູ້ອຳນວຍການ | ວັນທີແຕ່ງຕັ້ງ 19 ມິຖຸນາ 2019 |
| ທ່ານ. Xiao Wei | ຮອງຜູ້ອຳນວຍການ | ວັນທີແຕ່ງຕັ້ງ 10 ສິງຫາ 2022 |

### ຕົວແທນທາງກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານພາຍໃນປີ ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ ແມ່ນ ທ່ານ Wan Zhiteng - ຜູ້ອຳນວຍການ.

### ນັກກວດສອບ

ນັກກວດສອບບັນຊີຂອງທະນາຄານແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

# ທະນາຄານ ລາວຈີນ ຈຳກັດ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງທະນາຄານ ລາວຈີນ ຈຳກັດ (“ທະນາຄານ”) ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງທະນາຄານ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ**

ຄະນະບໍລິຫານຂອງທະນາຄານມີໜ້າທີ່ຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນຕາມກົດໝາຍບັນຊີແຫ່ງ ສປປ ລາວ ແລະ ລະບຽບຂໍ້ຕົກລົງທີ່ຕິດພັນກັບການກະກຽມ ແລະ ການລາຍງານຖານະທາງການເງິນທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ພາຍໃນປີ. ໃນການກະກຽມເອກະສານລາຍງານການເງິນ. ຄະນະບໍລິຫານຂອງທະນາຄານຈະຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາບັນດາລາຍການຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບດ້ານ;
- ຖະແຫຼງການວ່າບັນດາມາດຕະຖານບັນຊີທີ່ເໝາະສົມໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນໃນທາງປະຕິບັດຕໍ່ກັບມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທະນາຄານບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຮັບປະກັນວ່າການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ, ເຊິ່ງໄດ້ເປີດເຜີຍຖານະການເງິນຂອງທະນາຄານຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້ຢູ່. ຄະນະບໍລິຫານຂອງທະນາຄານຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງທະນາຄານ ແລະ ດ້ວຍເຫດນັ້ນ ຕ້ອງມີຂັ້ນຕອນທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າທະນາຄານໄດ້ປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂ້າງເທິງນັ້ນໃນການກະກຽມເອກະສານລາຍງານການເງິນ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານຂອງທະນາຄານມີຄວາມຍິນດີຖະແຫຼງວ່າເອກະສານລາຍງານການເງິນແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ໂດຍສອດຄ່ອງກັບກົດໝາຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

ທະນາຄານ ລາວຈີນ ຈຳກັດ Lao China Bank Co.,Ltd

ທ່ານ. WAN ZHITENG
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

27 ມີນາ 2024

EY
Building a better working world

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Reference: 11487079/68086518-LAS

**ບົດລາຍງານຂອງນັກກວດສອບອິດສະຫຼະ**

**ຮຽນ: ເຈົ້າຂອງ ທະນາຄານ ລາວຈີນ ຈຳກັດ**

### *ຄຳເຫັນ*

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງທະນາຄານ ລາວຈີນ ຈຳກັດ ("ທະນາຄານ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2023, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງທະນາຄານໄດ້ຖືກກະກຽມຖືກຕ້ອງໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

### *ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ (ISA). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ"* ໃນບົດລາຍງານຂອງພວກຂ້າພະເຈົ້າຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກທະນາຄານ ໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ຂໍ້ກຳນົດທາງດ້ານຈັນຍາບັນຂອງລາວ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

### *ບັນຫາທີ່ຄວນເອົາໃຈໃສ່ – ພື້ນຖານການບັນຊີ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍທະນາຄານ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫານີ້.

### *ຄວາມຮັບຜິດຊອບຂອງຄະນະບໍລິຫານ ແລະ ສະພາອຳນວຍການຂອງທະນາຄານຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານຂອງທະນາຄານແມ່ນ ມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.



A member firm of Ernst & Young Global Limited

EY

Building a better working world

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງທະນາຄານທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານທະນາຄານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານທະນາຄານມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ສະພາອຳນວຍການແມ່ນມີຄວາມຮັບຜິດຊອບໃນການຊີ້ນຳຂະບວນການການລາຍງານທາງດ້ານການເງິນຂອງທະນາຄານ.

***ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ***

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນ ໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານການກວດສອບສາກົນຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງແມ່ນສູງກວ່າຄວາມສ່ຽງທີ່ມີຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດຂອງຄະນະບໍລິຫານໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ, ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງທະນາຄານໃນການສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ອອກບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆອາດເປັນສາເຫດເຮັດໃຫ້ທະນາຄານຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ການປະເມີນການນຳໃຊ້ນະໂຍບາຍທາງບັນຊີທີ່ເໝາະສົມ ແລະ ຄວາມສົມເຫດສົມຜົນທາງດ້ານການປະເມີນດ້ານບັນຊີ ແລະ ການແລະ ຂໍ້ມູນທີ່ຕິດພັນກັບການເປີດເຜີຍໂດຍຄະນະບໍລິຫານ.



A member firm of Ernst & Young Global Limited

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບສະພາອຳນວຍການກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນຕ່າງໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ

Ha Phuong Dang
ຮຸ້ນສ່ວນ
ໃບອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນເລກທີ. 038/LCPAA-APT-2021

ນະຄອນຫຼວງວຽງຈັນ, ສປປ ລາວ

27 ມິນາ 2024



A member firm of Ernst & Young Global Limited

ທະນາຄານ ລາວຈີນ ຈຳກັດ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| *ລຳດັບ* | *ລາຍການ* | *ບົດ ອະທິບາຍ ເລກທີ* | *2023 ກີບ* | *2022 ກີບ* |
|---|---|---|---|---|
| **ກ.** | **ລາຍຮັບ ແລະ ລາຍຈ່າຍໃນການດຳເນີນງານ** | | | |
| **1.** | **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **108,999,381,511** | **95,727,383,131** |
| **2.** | **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **(50,826,112,452)** | **(48,585,352,776)** |
| **I.** | **ລາຍຮັບສຸດທິດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **58,173,269,059** | **47,142,030,355** |
| **3** | **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ** | **4** | **12,443,870,006** | **4,987,362,095** |
| **4** | **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | **4** | **(297,950,448)** | **(321,642,619)** |
| **5** | **ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | **5** | **20,664,765,983** | **48,987,105,427** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **90,983,954,600** | **100,794,855,258** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **6** | **ລາຍຮັບອື່ນໆຈາກການດຳເນີນງານ** | **6** | **2,752,073,249** | **5,884,200** |
| **7** | **ລາຍຈ່າຍບໍລິຫານ** | | **(42,825,473,588)** | **(40,390,231,972)** |
| 7.1 | ລາຍຈ່າຍເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ | 7 | (22,634,812,501) | (17,014,037,286) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 8 | (20,190,661,087) | (23,376,194,686) |
| **8** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | | **(8,227,324,949)** | **(8,553,227,372)** |
| **9** | **ລາຍຈ່າຍອື່ນໆໃນການດຳເນີນງານ** | **9** | **(1,731,446,756)** | **(2,861,633,868)** |
| **10** | **ລາຍຈ່າຍເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ** | **14.2** | **99,888,376** | **(11,775,000,000)** |

# ທະນາຄານ ລາວຈີນ ຈຳກັດ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | 2023 *ກີບ* | 2022 *ກີບ* |
|---|---|---|---|---|
| **III.** | **ກຳໄລກ່ອນອາກອນ** | | **41,051,670,932** | **37,220,646,246** |
| **11** | **ອາກອນກຳໄລພາຍໃນປີ** | **19** | **(2,161,229,657)** | **(8,616,607,557)** |
| **IV.** | **ກຳໄລຫຼັງອາກອນ** | | **38,890,441,275** | **28,604,038,689** |

ກະກຽມໂດຍ:

ທ່ານ ນາງ. YANG RONG
ຫົວໜ້າພະແນກການບັນຊີ ແລະ ການເງິນ

ກວດກືນໂດຍ:

ທ່ານ. WAN ZHITENG
ຜູ້ອຳນວຍການ

ທະນາຄານ ລາວຈີນ ຈຳກັດ Lao China Bank Co., Ltd

ນະຄອນຫຼວງວຽງຈັນ, ສປປ ລາວ

27 ມິຖຸນາ 2024

ທະນາຄານ ລາວຈີນ ຈຳກັດ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2023

| *ລຳດັບ* | *ຊັບສິນ* | *ບົດ ອະທິບາຍ ເລກທີ* | *31/12/2023 ກີບ* | *31/12/2022 ກີບ* |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")** | | **579,170,540,683** | **247,086,736,575** |
| 1 | ເງິນສົດໃນຄັງ | 10 | 105,818,946,222 | 62,576,072,422 |
| 2 | ເງິນຝາກຢູ່ ທຫລ | 11 | 473,351,594,461 | 184,510,664,153 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **493,875,375,488** | **516,109,557,052** |
| 1 | ເງິນຝາກກະແສລາຍວັນ | 12.1 | 270,375,375,488 | 130,889,557,052 |
| 2 | ເງິນຝາກມີກຳນົດ | 12.2 | 223,500,000,000 | 385,220,000,000 |
| **III** | **ການລົງທຶນໃນຫຼັກຊັບ** | **13** | **65,240,000,000** | **92,328,000,000** |
| **IV** | **ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບໜີ້ເສຍສິນເຊື່ອ** | **14** | **1,127,998,800,927** | **894,639,525,483** |
| **V** | **ຊັບສິນບັດ, ອຸປະກອນ ແລະ ສິດໃນການນຳໃຊ້ຊັບສິນ** | | **68,176,079,585** | **73,576,229,694** |
| 1 | ຊັບສິນຄົງທີ່ພວມຊື້ ຫຼື ພວມດຳເນີນງານ | 15.1 | - | 68,940,000 |
| 2 | ຊັບສິນບັດຄົງທີ່ມີຕົວຕົນ | 15.2 | 67,042,171,423 | 72,068,627,028 |
| 3 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 15.3 | 106,292,000 | - |
| 4 | ສິດໃນການນຳໃຊ້ຊັບສິນ | 15.4 | 1,027,616,162 | 1,438,662,667 |
| **VI** | **ຊັບສິນອື່ນໆ** | | **12,578,808,512** | **17,166,380,041** |
| 1 | ດອກເບ້ຍຄ້າງຮັບ | | 7,691,024,659 | 12,234,926,645 |
| 2 | ອາກອນມອບລ່ວງໜ້າ | 19 | 1,190,246,342 | 1,190,246,342 |
| 3 | ຊັບສິນອື່ນໆ | 16 | 3,697,537,511 | 3,741,207,054 |
| | **ລວມຊັບສິນທັງໝົດ** | | **2,347,039,605,195** | **1,840,906,428,845** |

ທະນາຄານ ລາວຈີນ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2023

| *ລຳດັບ* | *ໜີ້ສິນ ແລະ ທຶນ* | *ບົດອະທິບາຍ ເລກທີ* | *31/12/2023 ກີບ* | *31/12/2022 ກີບ* |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ນິຕິບຸກຄົນອື່ນ** | **17** | **326,415,991,485** | **293,392,481,810** |
| 1 | ເງິນຝາກກະແສລາຍວັນ | | 37,512,009,675 | 13,370,100,000 |
| 2 | ເງິນຝາກມີກຳນົດ | | 182,800,000,000 | 131,289,600,000 |
| 3 | ການກູ້ຢືມ | | 106,103,981,810 | 148,732,781,810 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **18** | **1,337,693,936,987** | **1,051,103,777,704** |
| 1 | ເງິນຝາກກະແສລາຍວັນ ແລະ ເງິນຝາກປະຈຳວັນ | | 394,964,537,319 | 247,978,035,509 |
| 2 | ເງິນຝາກປະຢັດ | | 124,009,179,953 | 145,005,121,031 |
| 3 | ເງິນຝາກມີກຳນົດ | | 814,696,219,715 | 654,600,561,836 |
| 4 | ເງິນຄ້ຳປະກັນ | | 4,024,000,000 | 3,520,059,328 |
| **III** | **ໜີ້ສິນອື່ນໆ** | | **200,762,560,980** | **55,219,517,130** |
| 1 | ດອກເບ້ຍຄ້າງຈ່າຍ | | 48,491,341,033 | 28,740,729,644 |
| 2 | ອາກອນ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ແກ່ ງົບປະມານລັດ | 19 | 330,362,495 | 595,805,586 |
| 3 | ໜີ້ຕ້ອງສົ່ງສັນຍາເຊົ່າ | 20 | 150,670,470,574 | 24,402,421,998 |
| 4 | ໜີ້ສິນອື່ນໆ | 15.3 | 1,270,386,878 | 1,480,559,902 |
| | **ລວມໜີ້ສິນ** | | **1,864,872,489,451** | **1,399,715,776,644** |
| **IV** | **ທຶນ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 21 | 379,879,082,826 | 379,879,082,826 |
| 2 | ຄັງສະສົມຕາມລະບຽບການ | | 11,443,688,127 | 7,554,644,000 |
| 3 | ຄັງຂະຫຍາຍທຸລະກິດ | | 8,546,155,200 | 8,546,155,200 |
| 4 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 14.2 | 8,155,130,017 | 6,069,107,749 |
| 5 | ກຳໄລສະສົມ | | 74,143,059,573 | 39,141,662,426 |
| | **ລວມທຶນ** | | **482,167,115,743** | **441,190,652,201** |
| | **ລວມໜີ້ສິນ ແລະ ທຶນ** | | **2,347,039,605,195** | **1,840,906,428,845** |

ທະນາຄານ ລາວຈີນ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2023

| *ລຳດັບ* | *ລາຍການນອກໃບລາຍງານຖານະການເງິນ* | *ບົດ ອະທິບາຍ ເລກທີ* | *31/12/2023 ກີບ* | *31/12/2022 ກີບ* |
|---|---|---|---|---|
| **I** | **ຄຳໝັ້ນສັນຍາ** | | | |
| 1 | ຄຳໝັ້ນສັນຍາທາງການເງິນໃຫ້ກັບລູກຄ້າ | | 3,138,000,000 | 3,520,059,328 |
| | **ລວມຄຳໝັ້ນສັນຍາທີ່ໄດ້ໃຫ້** | | **3,138,000,000** | **3,520,059,328** |
| **II** | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ** | | | |
| **ກ** | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳລັບເງິນກູ້** | | | |
| 1 | ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳລັບເງິນກູ້ໃຫ້ແກ່ລູກຄ້າ | | 6,160,566,752,692 | 5,327,841,875,582 |
| **ຂ** | **ຫຼັກຊັບຄ້ຳປະກັນ ແລະ ການມັດຈຳ ສຳລັບໜັງສືຄ້ຳປະກັນທີ່ອອກ** | | | |
| 1 | ຫຼັກຊັບຄ້ຳປະກັນ ແລະ ການມັດຈຳສຳລັບໜັງສືຄ້ຳປະກັນທີ່ອອກໃຫ້ແກ່ລູກຄ້າ | | 18,510,400,000 | - |
| | **ລວມຫຼັກຊັບຄ້ຳປະກັນ ແລະ ການມັດຈຳ** | | **6,179,077,152,692** | **5,331,361,934,910** |

ກະກຽມໂດຍ:

ທ່ານ ນາງ. YANG RONG
ຫົວໜ້າພະແນກການບັນຊີ ແລະ ການເງິນ

ກວດຄືນໂດຍ:

ທະນາຄານ ລາວຈີນ ຈຳກັດ
Lao China Bank Co.,Ltd

ທ່ານ. WAN ZHITENG
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

27 ມິຖຸນາ 2024

# ທະນາຄານ ລາວຈີນ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| ລາຍການ | ທຶນຈົດທະບຽນທີ່ຖອກແລ້ວ<br>ກີບ | ຄັງສະສົມຕາມລະບຽບການ<br>ກີບ | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ<br>ກີບ | ຄັງຂະຫຍາຍທຸລະກິດ<br>ກີບ | ກຳໄລສະສົມ<br>ກີບ | ລວມ<br>ກີບ |
|---|---|---|---|---|---|---|
| **ຍອດເຫຼືອນະວັນທີ 31/12/2021** | **379,879,082,826** | **4,694,240,131** | **2,841,687,235** | **8,546,155,200** | **26,796,053,606** | **422,757,218,998** |
| ທຶນຈົດທະບຽນ | - | - | - | - | - | - |
| ກຳໄລສຸດທິພາຍໃນປີ | - | - | - | - | 28,604,038,689 | 28,604,038,689 |
| ສ້າງຄັງສະສົມຕາມລະບຽບການ | - | 2,860,403,869 | - | - | (2,860,403,869) | - |
| ສ່ວນປ່ຽນແປງເງິນແຮສຸດທິພາຍໃນປີ | - | - | 2,649,474,336 | - | - | 2,649,474,336 |
| ສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດ | - | - | 577,946,178 | - | - | 577,946,178 |
| ຈ່າຍເງິນປັນຜົນ | - | - | - | - | (13,398,026,000) | (13,398,026,000) |
| **ຍອດເຫຼືອນະວັນທີ 31/12/2022** | **379,879,082,826** | **7,554,644,000** | **6,069,107,749** | **8,546,155,200** | **39,141,662,426** | **441,190,652,201** |
| ທຶນຈົດທະບຽນ | - | - | - | - | - | - |
| ກຳໄລສຸດທິພາຍໃນປີ | - | | - | - | 38,890,441,274 | 38,890,441,274 |
| ສ້າງຄັງສະສົມຕາມລະບຽບການ | - | 3,889,044,127 | - | - | (3,889,044,127) | - |
| ສ່ວນປ່ຽນແປງເງິນແຮສຸດທິພາຍໃນປີ | - | - | 1,469,633,745 | - | - | 1,469,633,745 |
| ສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດ | - | - | 616,388,523 | - | - | 616,388,523 |
| **ຍອດເຫຼືອນະວັນທີ 31/12/2023** | **379,879,082,826** | **11,443,688,127** | **8,155,130,017** | **8,546,155,200** | **74,143,059,573** | **482,167,115,743** |

ກະກຽມໂດຍ:

ທ່ານ ນາງ. YANG RONG
ຫົວໜ້າພະແນກການບັນຊີ ແລະ ການເງິນ

ກວດຄືນໂດຍ:

ທ່ານ. WAN ZHITENG
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

27 ມິຖຸນາ 2024

ທະນາຄານ ລາວຈີນ ຈຳກັດ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| *ລາຍການ* | *ບົດອະທິບາຍ ເລກທີ* | *2023 ກີບ* | *2022 ກີບ* |
|---|---|---|---|
| **ກິດຈະກຳທາງດ້ານການດຳເນີນງານ** | | | |
| **ກຳໄລສຸດທິກ່ອນຫັກອາກອນ** | | **41,051,670,932** | **37,220,646,246** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | 15 | 8,196,691,408 | 8,553,227,372 |
| ລາຍຈ່າຍເງິນແຮສ່ວນເສຍບ້ອງສິນເຊື່ອ | 14 | (2,106,757,014) | 13,553,311,136 |
| ລາຍຮັບດອກເບ້ຍ | | (108,999,381,511) | (95,727,383,130) |
| ລາຍຈ່າຍດອກເບ້ຍ | | 50,826,112,451 | 48,585,352,776 |
| **ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນຈາກການດຳເນີນງານ** | | **(11,031,663,734)** | **12,185,154,400** |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນຈາກການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | 116,723,668,654 | (82,598,923,831) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | (229,782,884,685) | (417,841,513,648) |
| ຊັບສິນອື່ນໆ | | 4,346,709,440 | 8,020,375,949 |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນຈາກການດຳເນີນງານ | | | |
| ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ | | 75,652,309,675 | 109,957,826,850 |
| ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງໃຫ້ລູກຄ້າອື່ນໆ | | 286,590,159,283 | 158,038,896,641 |
| ໜີ້ສິນອື່ນໆ | | 123,896,645,894 | 9,494,038,865 |
| ອາກອນກຳໄລຈ່າຍພາຍໃນປີ | 19 | (2,161,229,657) | (11,423,632,140) |
| ດອກເບ້ຍທີ່ໄດ້ຮັບ | | 113,543,283,498 | 91,661,025,650 |
| ດອກເບ້ຍທີ່ໄດ້ຈ່າຍ | | (31,075,501,062) | (38,268,369,028) |
| **ກະແສເງິນສົດສຸດທິ ຈາກ/(ໃຊ້ໃນ) ກິດຈະກຳການດຳເນີນງານ** | | **446,701,497,306** | **(160,775,120,293)** |
| **ກິດຈະກຳທາງດ້ານການລົງທຶນ** | | | |
| ການຊື້ຊັບສົມບັດ ແລະ ອຸປະກອນ | | (5,203,794,631) | (2,801,112,491) |
| ການສະສາງຊັບສິນຄົງທີ່ | | - | - |
| ການລົງທຶນຊື້ພັນທະບັດ | | (5,000,000,000) | (22,748,000,000) |
| ການຄືນກຳນົດຂອງພັນທະບັດ | | 32,088,000,000 | - |
| **ກະແສເງິນສົດສຸດທິຈາກ/(ໃຊ້ໃນ)ກິດຈະກາການລົງທຶນ** | | **21,884,205,369** | **(25,549,112,491)** |

ທະນາຄານ ລາວຈີນ ຈຳກັດ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| *ລາຍການ* | *ບົດ ອະທິບາຍ ເລກທີ* | *2023 ກີບ* | *2022 ກີບ* |
|---|---|---|---|
| **ກິດຈະກຳທາງດ້ານການເງິນ** | | | |
| ການເພີ່ມທຶນຈົດທະບຽນ ແລະ ການຈ່າຍເງິນປັນຜົນ | | - | (13,398,026,000) |
| ເພີ່ມຂຶ້ນຈາກການກູ້ຢືມ | | - | 34,735,581,810 |
| ການຈ່າຍເງິນກູ້ຢືມ | | (42,628,800,000) | - |
| **ກະແສເງິນສົດສຸດທິຈາກກິດຈະກຳທາງດ້ານການເງິນ** | | **(42,628,800,000)** | **21,337,555,810** |
| ສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດ | | 616,388,523 | 537,795,588 |
| **ປ່ຽນແປງສຸດທິໃນເງິນສົດ ແລະ ທຽບເທົ່າເງິນສົດ** | | **426,573,291,198** | **(164,448,881,384)** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **374,004,032,411** | **538,452,913,796** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **22** | **800,577,323,609** | **374,004,032,411** |

ກະກຽມໂດຍ:

ທ່ານ ນາງ. YANG RONG
ຫົວໜ້າພະແນກການບັນຊີ ແລະ ການເງິນ

ກວດຄືນໂດຍ:

ທ່ານ. WAN ZHITENG
ຜູ້ອຳນວຍການ

ທະນາຄານ ລາວຈີນ ຈຳກັດ Lao China Bank Co.,Ltd ນະຄອນຫຼວງ

ນະຄອນຫຼວງວຽງຈັນ, ສປປ ລາວ

27 ມິຖຸນາ 2024

## 1. ຂໍ້ມູນກ່ຽວກັບທະນາຄານ

*ການສ້າງຕັ້ງ ແລະ ການເຄື່ອນໄຫວ*

ທະນາຄານ ລາວຈີນ ຈຳກັດ ("ທະນາຄານ") ແມ່ນທະນາຄານຮ່ວມທຶນ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ໂດຍຮ່ວມທຶນລະຫວ່າງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (39.87%) ແລະ ທະນາຄານ ຟູດຽນ ຈຳກັດ (60.13%). ທະນາຄານໄດ້ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດການດຳເນີນທຸລະກິດດ້ານການທະນາຄານເລກທີ 20/ທຫລ ອອກໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 20 ມັງກອນ 2014, ໃບທະບຽນວິສາຫະກິດສະບັບລ່າສຸດ ເລກທີ 0839/ຈທວ ລົງວັນທີ 26 ເມສາ 2022.

ກິດຈະກຳຕົ້ນຕໍຂອງທະນາຄານແມ່ນ ເພື່ອສະໜອງການບໍລິການທົ່ວໄປດ້ານການທະນາຄານ ແລະ ບໍລິການ ອື່ນໆທີ່ກ່ຽວຂ້ອງກັບການເງິນໃນ ສປປ ລາວ.

*ທຶນຈົດທະບຽນ*

ທຶນຈົດທະບຽນເບື້ອງຕົ້ນຂອງທະນາຄານແມ່ນ 300,000,000,000 ກີບ. ທຶນຈົດທະບຽນທີ່ທະນາຄານໄດ້ຖອກຕົວຈິງ ນະວັນທີ 31 ທັນວາ 2023 ແມ່ນ 379,879,082,826 ກີບ (31 ທັນວາ 2022: 379,879,082,826 ກີບ).

*ທີ່ຕັ້ງ*

ທະນາຄານ ຕັ້ງຢູ່ ຕຶກທະນາຄານລາວຈີນ ສຳນັກງານໃຫຍ່, ເລກທີ 268, ໜ່ວຍ 12, ບ້ານ ສີບຸນເຮືອງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2023, ທະນາຄານມີ 01 (ໜຶ່ງ) ສາຂາຢູ່ແຂວງ ຫຼວງນ້ຳທາ, ສປປ ລາວ.

*ພະນັກງານ*

ພະນັກງານທັງໝົດຂອງທະນາຄານ ນະວັນທີ 31 ທັນວາ 2023 ມີ 54 ຄົນ (31 ວັນທີ 2022: 53 ຄົນ).

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### *2.1. ບົດຖະແຫຼງການໃນການປະຕິບັດ*

ຄະນະບໍລິຫານຂອງທະນາຄານຂໍຖະແຫຼງວ່າ ເອກະສານລາຍງານການເງິນແມ່ນຖືກກະກຽມໂດຍສອດຄ່ອງກັບກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີເອກະສານລາຍງານການເງິນ.

### *2.2. ພື້ນຖານໃນການກະກຽມ*

ທະນາຄານໄດ້ບັນທຶກບັນຊີເປັນເງິນກີບລາວ ("ກີບ") ແລະ ກະກຽມເອກະສານລາຍງານການເງິນ ເປັນຫົວໜ່ວຍກີບ ("ກີບ") ຕາມດຳລັດ ເລກທີ02/ນຍ ໂດຍນາຍົກລັດຖະມົນຕີແຫ່ງ ສປປ ລາວ ໃນວັນທີ 22 ມີນາ 2000, ກົດໝາຍບັນຊີ ຂອງ ສປປ ລາວ ແລະ ກົດລະບຽບການອື່ນໆທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ("ລະບົບບັນຊີລາວ").

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍໃນເອກະສານລາຍງານ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ໄດ້ຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ສະນັ້ນ ເອກະສານລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນຂອງທະນາຄານ ແລະ ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ທະນາຄານມີປີການບັນຊີທີ່ສາມາດກະກຽມເອກະສານການເງິນແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

### *2.3. ການປ່ຽນແປງຂອງນະໂຍບາຍການບັນຊີ*

ນະໂຍບາຍການບັນຊີທີ່ທະນາຄານນຳໃຊ້ເພື່ອກະກຽມເອກະສານລາຍງານການເງິນເຫຼົ່ານີ້ ແມ່ນມີຄວາມສອດຄ່ອງກັບເອກະສານລາຍງານການເງິນທີ່ກະກຽມສຳລັບການລາຍງານຂອງທະນາຄານ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2022.

### *2.4. ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໂດຍອີງຕາມຫຼັກການບັນຊີແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍຕາມທີ່ໄດ້ກຳນົດຢູ່ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບຄ້າງຮັບດອກເບ້ຍຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ໄດ້ກາຍເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ (ເບິ່ງບົດອະທິບາຍເລກທີ 2.8 ສຳລັບນິຍາມຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຄະນະບໍລິຫານເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍຂອງເງິນກູ້ດັ່ງກ່າວຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອໄດ້ຮັບດອກເບ້ຍຕົວຈິງເທົ່ານັ້ນ.

### *2.5. ການຮັບຮູ້ຄ່າທຳນຽມ ແລະ ຄ່າບໍລິການ*

ຄ່າທຳນຽມ ແລະ ຄ່າບໍລິການປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການບໍລິການໂອນເງິນ (ລວມມີ ການຊຳລະການຄ້າ), ຄ່າທຳນຽມ ເກີດຂຶ້ນຈາກທຸລະກຳການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຈາກການຄ້ຳປະກັນທາງການເງິນ.

ຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບົນພື້ນຖານຫຼັກການເງິນສົດ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.6. *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ເຊິ່ງມີໄລຍະລົງທຶນບໍ່ເກີນ 30 ວັນ ທີ່ສາມາດປ່ຽນເປັນເງິນສົດໄດ້ຢ່າງງ່າຍດາຍ ແລະ ເງິນຝາກຢູ່ທະນາຄານອື່ນທີ່ມີກຳນົດບໍ່ເກີນ 30 ວັນ.

### 2.7. *ເງິນກູ້ໃຫ້ແກ່ລູກຄ້າ*

ເງິນກູ້ໃຫ້ແກ່ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍລົບໃຫ້ເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ.

### 2.8. *ການຈັດຊັ້ນໜີ້ ແລະ ເງິນແຮສຳລັບກິດຈະກຳສິນເຊື່ອ*

*ການຈັດຊັ້ນເງິນກູ້*

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ ("ທຫລ 512") ລົງວັນທີ ລົງວັນທີ 29 ມິຖຸນາ 2018, ຄຳແນະນຳຈັດຕັ້ງປະຕິບັດເລກທີ. 898/ກຄທ ("ທຫລ 898") ລົງວັນທີ 14 ພະຈິກ 2018 ແລະ ແຈ້ງການສະບັບເລກທີ 818/ກຄທ ("ທຫລ 818"), ລົງວັນທີ 16 ຕຸລາ 2018, ທະນາຄານໄດ້ຈັດຊັ້ນເງິນກູ້ເປັນ 5ກຸ່ມ ໂດຍອີງຕາມປະຫວັດການຄ້າງຈ່າຍ ແລະ ປັດໄຈດ້ານຄຸນະພາບອື່ນໆ. ເງິນກູ້ ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນ ເງິນກູ້ທີ່ບໍ່ເກີດດອກອອກຜົນ ("NPL").

ທະນາຄານຍັງໄດ້ນຳໃຊ້ກົດລະບຽບ 238/ທຫລ ລົງວັນທີ 30 ມີນາ 2020 ແລະ ຄຳແນະນຳສະບັບ ເລກທີ 249/ທຫລ ລົງ11 ພຶດສະພາ 2020 ແລະ ຄຳແນະນຳການຈັດຕັ້ງປະຕິບັດເພີ່ມເຕີມເລກທີ 254/ກຄທ ລົງວັນທີ 5 ພຶດສະພາ 2021 ອອກໂດຍ ທຫລ ໃນການປັບປຸງໂຄງສ້າງເງິນກູ້, ຂະຫຍາຍເວລາ ແລະ ຮັກສາກຸ່ມປະເພດເງິນກູ້ ເພື່ອຊ່ວຍເຫຼືອຜູ້ກູ້ຢືມທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດປອດອັກເສບ (Covid-19). ດັ່ງນັ້ນ, ທະນາຄານຈຶ່ງໄດ້ປັບປຸງໂຄງສ້າງໃຫ້ແກ່ເງິນກູ້ທີ່ມີຄຸນສົມບັດຄົບຖ້ວນ ແລະ ຍັງຄົງຮັກສາການຈັດກຸ່ມຄືທີ່ໄດ້ຖືກຈັດໄວ້ກ່ອນວັນທີ 01 ມັງກອນ 2021.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.8. *ການຈັດຊັ້ນໜີ້ ແລະ ເງິນແຮສຳລັບກິດຈະກຳສິນເຊື່ອ* (ຕໍ່)

*ເງິນແຮ*

ອີງຕາມຂໍ້ຕົກລົງເລກທີ ທຫລ 512, ທຫລ 898 ແລະ ທຫລ 818, ທະນາຄານຕ້ອງໄດ້ສ້າງເງິນແຮຄ່າເສື່ອມເງິນກູ້ ໂດຍອີງຕາມການຈັດຊັ້ນໜີ້ຂອງແຕ່ລະກຸ່ມດັ່ງຕໍ່ໄປນີ້:

| *ກຸ່ມ* | *ອັດຕາເງິນແຮ* | *ປະເພດຄັງເງິນແຮ (i)* | *ການບັນຊີສຳລັບຍອດເຫຼືອເງິນແຮ (ii)* | *ການບັນຊີສຳລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| *ເງິນກູ້ທີ່ເກີດດອກອອກຜົນ* | | | | |
| A | 1.0% | ຄັງເງິນແຮທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນໆ |
| B | 3.0% | ຄັງເງິນແຮ ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ລາຍຈ່າຍ/ລາຍຮັບອື່ນໆ |
| *ເງິນກູ້ທີ່ບໍ່ເກີດດອກອອກຜົນ* | | | | |
| C | 20.0% | ຄັງເງິນແຮທົ່ວໄປ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| D | 50.0% | ຄັງເງິນແຮ ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| E | 100.0% | ຄັງເງິນແຮ ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |

(i) ຈຳນວນເງິນແຮແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ລຸ່ມນີ້:

ກ. ເງິນແຮທົ່ວໄປ= ອັດຕາເງິນແຮ x ຍອດເຫຼືອເງິນກູ້

ຂ. ເງິນແຮສະເພາະ= ອັດຕາເງິນແຮ x (ຍອດເຫຼືອເງິນກູ້ - ມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນ)

(ii) ຍອດເຫຼືອສະສົມເງິນແຮສຳລັບ*ເງິນກູ້ທີ່ເກີດດອກອອກຜົນທີ່ຈັດຊັ້ນເປັນກຸ່ມ A* ແມ່ນຖືກບັນທຶກໃນໃບລາຍງານຖານະການເງິນ ໃນ "ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ" ຂອງບັນຊີ ທຶນ ແລະ ຄັງສຳຮອງຂອງທະນາຄານ.

ຍອດເຫຼືອສະສົມຂອງເງິນແຮສຳລັບ *ເງິນກູ້ອື່ນໆ* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນໃນ "ເງິນກູ້ໃຫ້ລູກຄ້າ , ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ".

(iii) ການປ່ຽນແປງຂອງເງິນແຮສຳລັບ *ເງິນກູ້ທີ່ເກີດດອກອອກຜົນ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍຈາກການດຳເນີນງານອື່ນໆ". ສຳລັບລາຍຈ່າຍເງິນແຮ ແລະ "ລາຍຮັບອື່ນໆຈາກການດຳເນີນງານ" ສຳລັບການເກັບຄືນລາຍຈ່າຍເງິນແຮ.

ການປ່ຽນແປງຂອງເງິນແຮສຳລັບ *ເງິນກູ້ອື່ນໆ* ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານຢູ່ "ລາຍຈ່າຍເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ".

## 2. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.9. ຊັບສິນບັດຄົງທີ່*

ຊັບສິນບັດຄົງທີ່ລວມມີ ຊັບສິນບັດຄົງທີ່ມີຕົວຕົນ ແລະ ຊັບສິນບັດຄົງທີ່ບໍ່ມີຕົວຕົນ, ຊັບສິນບັດຄົງທີ່ມີຕົວຕົນລວມມີ ອຸປະກອນຮັບໃຊ້ຫ້ອງການ, ເຟີນີເຈີ ແລະ ເຄື່ອງຕົບແຕ່ງ, ຕຶກອາຄານ ແລະ ການປັບປຸງ ແລະ ພາຫານະ. ຊັບສິນບັດຄົງທີ່ບໍ່ມີຕົວຕົນລວມມີຄ່າອອກແບບ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ ຄ່າຫຼຸ້ຍຫ້ຽນສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບດ້ວຍມູນຄ່າຊື້ບວກກັບຄ່າໃຊ້ຈ່າຍທີ່ຕິດພັນໃນການເຮັດໃຫ້ຊັບສິນບັດຄົງທີ່ສາມາດນຳໃຊ້ໄດ້.

ບັນດາລາຍຈ່າຍສຳລັບການຊື້ເພີ່ມ, ລາຍຈ່າຍການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນສະສົມຈະຖືກສະສາງຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

### *2.10. ຄ່າຫຼຸ້ຍຫ້ຽນ*

ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດຄົງທີ່ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົວໃນອັດຕາທີ່ກຳນົດໃຊ້ຕໍ່ ການຄາດຄະເນອາຍຸການນຳໃຊ້ຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ອອກໂດຍປະທານສະພາແຫ່ງຊາດຊຶ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2020 ເປັນຕົ້ນໄປ. ອັດຕາການຄິດໄລ່ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມປະຈຳປີມີດັ່ງຕໍ່ໄປນີ້:

| | |
|---|---|
| *ຊັບສິນບັດຄົງທີ່ທີ່ມີຕົວຕົນ:* | |
| ອຸປະກອນຮັບໃຊ້ຫ້ອງການ | 20% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ຕຶກອາຄານ ແລະ ການປັບປຸງ | 5% - 10% |
| ພາຫະນະ | 20% |
| *ຊັບສິນບັດຄົງທີ່ທີ່ບໍ່ມີຕົວຕົນ:* | |
| ຄ່າອອກແບບ | 50% |

### *2.11. ຄັງສະສົມຕາມລະບຽບການ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍ ວ່າດ້ວຍທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018, ບັນດາທະນາຄານທຸລະກິດ ແລະ ສາຂາຂອງ ທະນາຄານຕ່າງປະເທດ ຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການດັ່ງລຸ່ມນີ້:

- ຄັງສະສົມຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ໂດຍອີງຕາມ ມາດຕາ 154 (ປັບປຸງ) ກົດໝາຍວ່າດ້ວຍວິສາຫະກິດ ລົງວັນທີ 29 ທັນວາ 2022, ທະນາຄານຕ້ອງຫັກ 10% ຂອງກຳໄລສຸດທິ ເພື່ອສ້າງເປັນຄັງສຳຮອງໄວ້ໃນແຕ່ລະປີ. ເມື່ອຄັງສຳຮອງນີ້ມີເງິນສະສົມໄດ້ 50% ຂອງທຶນຈົດທະບຽນຂອງທະນາຄານແລ້ວ, ທະນາຄານສາມາດໂຈະການຫັກເງິນເຂົ້າຄັງສຳຮອງດັ່ງກ່າວ ເວັ້ນເສຍແຕ່ວ່າ ກົດໝາຍໄດ້ກຳນົດໄວ້ຢ່າງອື່ນ.

**2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

***2.11. ຄັງສະສົມຕາມລະບຽບການ*** (ຕໍ່)

ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆສ້າງຂຶ້ນໂດຍການຕັດສິນໃຈຂອງຄະນະບໍລິຫານ.

ດັ່ງນັ້ນ, ໃນປີ 2023 ທະນາຄານໄດ້ສ້າງຄັງສໍາຮອງດັ່ງລຸ່ມນີ້:

| | *% ກໍາໄລຫຼັງອາກອນ* |
|---|---|
| ຄັງສະສົມຕາມລະບຽບການ | 10% |

***2.12 ສັນຍາເຊົ່າ***

*2.12.1. ສິດໃນການນໍາໃຊ້ຊັບສິນ*

ໃນມື້ເລີ່ມຕົ້ນຂອງສັນຍາ, ທະນາຄານຈະປະເມີນວ່າສັນຍາເປັນ, ຫຼື ປະກອບດ້ວຍອົງປະກອບຂອງການເຊົ່າບໍ່ນັ້ນ ແມ່ນອີງຕາມການພິຈາລະນາສັນຍາທີ່ບົ່ງບອກເຖິງການເປັນຜູ້ນໍາໃຊ້ (ຜູ້ເຊົ່າ) ສິດໃນການຄວບຄຸມການນໍາໃຊ້ຊັບສິນ ທີ່ລະບຸໃນຊ່ວງໄລຍະເວລາໃດໜຶ່ງໃນການແລກປ່ຽນກັບຄ່າຕອບແທນ. ຫາກສັນຍາມີອົງປະກອບການເຊົ່າຫຼາຍກວ່າໜຶ່ງອົງປະກອບ ຫຼື ປະສົມປະສານທຸລະກໍາການເຊົ່າ ແລະ ການບໍລິການ ຈະຖືກພິຈາລະນາໃຫ້ແບ່ງອອກເປັນສ່ວນຕາມແຕ່ລະອົງປະກອບຂອງສັນຍາເຊົ່າ ແລະ ທີ່ບໍ່ແມ່ນອົງປະກອບຂອງສັນຍາເຊົ່າໂດຍສະຫຼຸບ ແລະ ຕີລາຄາຂອງສັນຍາຄືນໃໝ່ທຸກຄັ້ງຕາມພື້ນຖານລາຄາຊື້ຂາຍສິນຄ້າລາຍການດຽວ. ທະນາຄານລວມເອົາສ່ວນປະກອບຂອງສັນຍາເຊົ່າ ແລະ ທີ່ບໍ່ແມ່ນສັນຍາເຊົ່າເຂົ້າກັນໃນກໍລະນີທີ່ບໍ່ສາມາດແຍກສ່ວນປະກອບທີ່ບໍ່ແມ່ນສັນຍາຄ່າເຊົ່າໄດ້.

ທະນາຄານຈະຮັບຮູ້ ສິດນໍາໃຊ້ຊັບສິນທີ່ຖືກຕ້ອງໃນວັນທີ ທີ່ເລີ່ມຕົ້ນການເຊົ່າ, (ຕົວຢ່າງ ວັນທີ ທີ່ຊັບສິນພ້ອມໃຊ້ງານ); ສິດນໍາໃຊ້ຊັບສິນແມ່ນຖືກຕີມູນຄ່າດ້ວຍມູນຄ່າຕົ້ນທຶນ ຫັກລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມ, ແລະ ປັບປຸງສໍາລັບການຕີມູນຄ່າຄືນໃໝ່ຂອງໜີ້ສິນຕາມສັນຍາເຊົ່າ .ມູນຄ່າຕົ້ນທຶນຂອງສິດນໍາໃຊ້ຊັບສິນແມ່ນລວມເອົາຈໍານວນຂອງໜີ້ສິນຕາມສັນ ຍາເຊົ່າທີ່ໄດ້ຖືກດັດແກ້ສໍາລັບການຈ່າຍຄ່າເຊົ່າ ທີ່ໄດ້ປະຕິບັດໄປແລ້ວ ຫຼື ກ່ອນມື້ທີ່ເລີ່ມຕົ້ນນໍາໃຊ້, ບວກຄ່າໃຊ້ຈ່າຍທາງກົງໃນເບື້ອງຕົ້ນທີ່ເກີດຂຶ້ນ ແລະ ການຄາດຄະເນຄ່າໃຊ້ຈ່າຍໃນການຮື້ຖອນ ແລະ ເຄື່ອນຍ້າຍຊັບສິນ ຫຼື ການຟື້ນຟູຊັບສິນທີ່ຕິດພັນ ຫຼື ສະຖານທີ່ທີ່ມັນຕັ້ງຢູ່, ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ . ໄລຍະເວລາການເຊົ່າລວມເຖິງໄລຍະເວລາທີ່ກວມເອົາທາງເລືອກໃນການຂະຫຍາຍ ຖ້າຫາກວ່າກຸ່ມບໍລິສັດມີຄວາມໝັ້ນໃຈໃນການໃຊ້ທາງເລືອກນັ້ນ .ຍົກເວັ້ນ ກໍລະນີທີ່ທະນາຄານມີຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າຈະໄດ້ຮັບກໍາມະສິດໃນຊັບສິນທີ່ໃຫ້ເຊົ່າເມື່ອສິ້ນສຸດໄລຍະເວລາການເຊົ່າການຮັບຮູ້ສິດນໍາໃຊ້ຊັບສິນໃຫ້ເປັນຄ່າຫຼູ້ຍຫ້ຽນບົນພື້ນຖານຮູບແບບການຄິດໄລ່ແບບເສັ້ນຊື່ຕາມອາຍຸການໃຊ້ງານ. ສິດໃນການ ນໍາໃຊ້ຊັບສິນແມ່ນຂຶ້ນກັບການປະເມີນຄ່າເສື່ອມ

**2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

***2.12. ສັນຍາເຊົ່າ*** (ຕໍ່)

*2.12.2. ໜີ້ຕ້ອງສົ່ງສັນຍາເຊົ່າ*

ນະວັນທີເລີ່ມຕົ້ນຂອງການເຊົ່າ, ທະນາຄານໄດ້ຮັບຮູ້ໜີ້ສິນການເຊົ່າທີ່ຖືກວັດແທກເປັນມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າທີ່ຕ້ອງຈ່າຍຕະຫຼອດໄລຍະສັນຍາເຊົ່າ. ການຈ່າຍຄ່າເຊົ່າລວມມີການຈ່າຍແບບຄົງທີ່ (ລວມທັງການຈ່າຍຄ່າເຊົ່າທີ່ມີເນື້ອຫາເປັນການຈ່າຍຄົງທີ່) ລົບສ່ວນຫຼຸດທີ່ຕ້ອງຮັບ, ການຈ່າຍຄ່າເຊົ່າທີ່ປ່ຽນແປງທີ່ຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ຈຳນວນທີ່ຄາດວ່າຈະຈ່າຍພາຍໃຕ້ການຄໍ້າປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າ ຍັງລວມມີລາຄາທີ່ໃຊ້ໃນທາງເລືອກຂອງການຊື້ທີ່ແນ່ນອນຢ່າງສົມເຫດສົມຜົນວ່າ ຈະປະຕິບັດໂດຍທະນາຄານ ແລະ ການຈ່າຍຄ່າປັບໃໝສຳລັບການຍຸດຕິການເຊົ່າ, ຖ້າວ່າສັນຍາເຊົ່າສະທ້ອນໃຫ້ເຫັນວ່າທະນາຄານໃຊ້ທາງເລືອກໃນການຍຸດຕິການເຊົ່າ. ການຈ່າຍຄ່າເຊົ່າທີ່ປ່ຽນແປງໂດຍບໍ່ຂຶ້ນກັບດັດສະນີ ຫຼື ອັດຕາຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະທີ່ເຫດການ ຫຼື ສະພາບການທີ່ກໍ່ໃຫ້ເກີດການຈ່າຍເກີດຂຶ້ນ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງການຊຳລະຄ່າເຊົ່າ, ທະນາຄານນຳໃຊ້ອັດຕາສ່ວນເພີ່ມຂອງການກູ້ຢືມນະມື້ເລີ່ມຕົ້ນຂອງສັນຍາເຊົ່າ, ຖ້າອັດຕາດອກເບ້ຍສ່ວນຫຼຸດສັນຍາເຊົ່າບໍ່ສາມາດກຳນົດໄດ້. ຫຼັງຈາກມື້ເລີ່ມຕົ້ນຂອງສັນຍາເຊົ່າ, ມູນຄ່າໜີ້ສິນຕາມສັນຍາເຊົ່າແມ່ນເພີ່ມຂຶ້ນເພື່ອສະທ້ອນເຖິງດອກເບ້ຍ ແລະ ສ່ວນຫຼຸດລົງສຳລັບການຊຳລະຄ່າເຊົ່າ. ນອກຈາກນີ້, ມູນຄ່າຕາມບັນຊີ ຂອງໜີ້ສິນຕາມສັນຍາເຊົ່າ ແມ່ນໄດ້ຮັບການຕີມູນຄ່າຄືນໃໝ່ຖ້າມີການປ່ຽນແປງໃດໜຶ່ງ ເຊັ່ນການປ່ຽນແປງຂອງໄລຍະເວລາການເຊົ່າ, ການປ່ຽນແປງໃນເນື້ອໃນເງື່ອນໄຂການຊຳລະ ຫຼື ປ່ຽນແປງໃນການປະເມີນເພື່ອຊື້ບັນດາຊັບສິນດັ່ງກ່າວ.

*2.12.3. ສັນຍາເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕໍ່າ*

ທະນາຄານໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າໄລຍະສັ້ນ ທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າຈາກວັນທີເລີ່ມຕົ້ນຂອງການເຊົ່າ ແລະ ບໍ່ລະບຸທາງເລືອກໃນການຊື້. ພ້ອມທັງນຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າຊັບສິນມູນຄ່າຕໍ່າຂອງຊັບສິນທີ່ພິຈາລະນາວ່າມີມູນຄ່າຕໍ່າ. ການຊຳລະຄ່າເຊົ່າຂອງສັນຍາເຊົ່າໄລຍະສັ້ນ ແລະ ຊັບສິນທີ່ມີມູນຄ່າຕໍ່າ ແມ່ນຮັບຮູ້ເປັນລາຍຈ່າຍແບບເສັ້ນຊື່ຕະຫຼອດໄລຍະສັນຍາເຊົ່າ.

*2.12.4. ສິ່ງສຳຄັນໃນການຕັດສິນໃຈໃນການກຳນົດໄລຍະເວລາຂອງສັນຍາເຊົ່າກັບຕົວເລືອກການຕໍ່ອາຍຸ*

ທະນາຄານໄດ້ກຳນົດໄລຍະເວລາການເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກສັນຍາໄດ້, ລວມທັງໄລຍະເວລາທີ່ກວມເອົາທາງເລືອກທີ່ຈະຕໍ່ອາຍຸຂອງການເຊົ່າ ຖ້າຫາກວ່າມັນມີເຫດຜົນທີ່ແນ່ນອນໃນການຈັດຕັ້ງປະຕິບັດ ຫຼື ໄລຍະເວລາໃດໜຶ່ງທີ່ກວມເອົາທາງເລືອກທີ່ຈະຢຸດສັນຍາເຊົ່າ, ຖ້າຫາກວ່າ ມັນມີເຫດຜົນທີ່ແນ່ນອນວ່າ ບໍ່ຄວນສືບຕໍ່ເຊົ່າຕໍ່ໄປ.

